2. ແຕ່ຕ້ອງຈ່າຍຄ່າທົດແທນຢ່າງສົມເຫດສົມຜົນ ໃຫ້ແກ່ເຈົ້າຂອງສິດທິບັດການຢາ.

ເຈົ້າຂອງສິດທິບັດການຢາມີສິດອຸທອນຕໍ່ການອອກຄຳສັ່ງ ຫຼື ຈຳນວນຄ່າທົດແທນທີ່ຕົນເຫັນວ່າບໍ່ເໝາະສົມ.

*ຕົວຢ່າງ: ບໍລິສັດ A ເປັນເຈົ້າຂອງສິດທິບັດຢາປົວໄຂ້ຫວັດສັດປີກ. ຕໍ່ມາໄດ້ເກີດການລະບາດຢ່າງຮ້າຍແຮງຂອງໄຂ້ຫວັດສັດປີກ, ລັດຖະບານສາມາດນຳໃຊ້ສິດທິບັດຂອງບໍລິສັດ A ທີ່ ກ່າວມາ ໂດຍບໍ່ຈຳເປັນຕ້ອງຂໍອະນຸຍາດຈາກບໍລິສັດດັ່ງກ່າວ ແຕ່ຕ້ອງຈ່າຍທົດແທນຢ່າງສົມເຫດສົມຜົນແກ່ບໍລິສັດດັ່ງກ່າວ ແລ້ວເອົາຢາທີ່ຜະລິດໄປແຈກຢາຍໃຫ້ປະຊາຊົນ ເພື່ອສະກັດ ກັ້ນໄພລະບາດດັ່ງກ່າວ.*

- **<u>ການນຳເຂົ້າແບບຂະໜານ (Parallel Import ຫຼື PI):</u>**
  ເຈົ້າຂອງສິດທິບັດຢາປົວພະຍາດໃດໜຶ່ງບໍ່ມີສິດຫ້າມຜູ້ອື່ນນຳເຂົ້າ ແລະ ຈຳໜ່າຍຢາປົວພະຍາດດັ່ງກ່າວຈາກປະເທດອື່ນ.

*ຕົວຢ່າງ: ບໍລິສັດ X ເປັນເຈົ້າຂອງສິດທິບັດຂອງຢາແກ້ປວດ ຊະນິດໜຶ່ງ ເຊິ່ງຈຳໜ່າຍຢາດັ່ງກ່າວ ຢູ່ປະເທດ A ດ້ວຍລາຄາ 5 ໂດລາຕໍ່ຊອງ ແລະ ໃນປະເທດ B ແມ່ນ 2 ໂດລາຕໍ່ຊອງ (ເນື່ອງຈາກ ການແຂ່ງຂັນດ້ານລາຄາຢູ່ປະເທດ B ສູງ ແລະ ຕົ້ນທຶນການຜະລິດຕໍ່າເຮັດໃຫ້ຕ້ອງຂາຍຖືກກວ່າ). ບໍລິສັດ X ບໍ່ ສາມາດຫ້າມການນຳເຂົ້າຢາດັ່ງກ່າວຈາກປະເທດ B ເຂົ້າມາຈຳ ໜ່າຍໃນປະເທດ A.*

ການນຳເຂົ້າແບບຂະໜານເປັນການສະກັດກັ້ນການຜູກຂາດຕະ ຫຼາດ ແລະ ເປັນນະໂຍບາຍສົ່ງເສີມການແຂ່ງຂັນ ດ້ານລາຄາ ອັນຈະເຮັດໃຫ້ຜູ້ບໍລິໂພກສາມາດເຂົ້າເຖິງຢາປົວພະຍາດຫຼາຍຂຶ້ນ



.



*"ສິດທິບັດການຢາ ເປັນສິດທິບັດປະເພດໜຶ່ງ ແລະ ໝາຍເຖິງເອກະສິດຕໍ່ວິທີການຜະລິດຢາປົວພະຍາດ."*


ສົນໃຈຂໍ້ມູນເພີ່ມເຕີມ
ກົມນະໂຍບາຍການຄ້າຕ່າງປະເທດ
ກະຊວງອຸດສາຫະກຳ ແລະ ການຄ້າ
Tel/Fax: 021-450066
Email: foreigntrade@laoftpd.com
www.laoftpd.com



*ສະໜັບສະໜູນໂດຍ:*

USAID
FROM THE AMERICAN PEOPLE


*ທ່ານຮູ້ບໍ່ວ່າ ສິດທິບັດການຢາແມ່ນຫຍັງ ແລະ ກ່ຽວພັນກັບສຸຂະພາບທ່ານຄືແນວໃດ?*

# ສິດຕໍ່ຊັບສິນທາງປັນຍາ:

# ສິດທິບັດການຢາ



## I. ສິດທິບັດການຢາແມ່ນຫຍັງ?

ສິດທິບັດການຢາ (Pharmaceutical Patent) ເປັນສິດ ທິບັດ (Patent) ປະເພດໜຶ່ງ ແລະ ໝາຍເຖິງເອກະສິດຕໍ່ ວິທີການຜະລິດຢາປົວພະຍາດ. ເອກະສິດດັ່ງກ່າວ ປະ ກອບມີສິດນຳໃຊ້, ສິດໂອນ ແລະ ສິດຫ້າມຜູ້ອື່ນນຳໃຊ້ສິດ ດັ່ງກ່າວ.

*ຕົວຢ່າງ: ບໍລິສັດໄດ້ຈົດທະບຽນສິດທິບັດ ວິທີການຜະລິດ ຢາດີໂຂ ຊະນິດໜຶ່ງ ຢູ່ ສປປ ລາວ. ບໍລິສັດກໍ່ມີສິດພຽງຜູ້ດຽວໃນ ການນຳໃຊ້, ໂອນວິທີການຜະລິດຢາ ແລະ ສິດຫ້າມຜູ້ອື່ນນຳໃຊ້ ສິດດັ່ງກ່າວ.*

## II. ເປັນຫຍັງຈຶ່ງຕ້ອງປົກປ້ອງ?

- ເພື່ອປະຕິບັດຕາມມາດຕາ 17 ແລະ 24 ຂອງລັດ ຖະທຳມະນູນແຫ່ງ ສປປ ລາວ ກ່ຽວກັບການປົກປ້ອງ ສິດຕໍ່ກຳມະສິດ ແລະ ການສົ່ງເສີມສະຕິປັນຍາ, ຫົວຄິດປະດິດສ້າງ ແລະ ການປົກປ້ອງຊັບສິນທາງ ປັນຍາ.





**"ເຈົ້າຂອງສິດທິບັດການຢາມີສິດອຸທອນຕໍ່ການອອກຄຳສັ່ງ ຫຼື ຈຳນວນຄ່າ ທົດແທນທີ່ຄິດເຫັນວ່າບໍ່ເໝາະສົມ."**

- ເພື່ອປະຕິບັດຕາມສົນທິສັນຍາສາກົນທີ່ ສປປ ລາວ ເຂົ້າເປັນພາຄີ ຄື: ສັນຍາວ່າດ້ວຍສິດຕໍ່ຊັບສິນທາງປັນຍາ ໃນດ້ານທີ່ຕິດພັນກັບການຄ້າ (ຫຼື Agreement on Trade Related Aspects of Intellectual Property Rights ຫຼື TRIPS Agreement).

## III. ປົກປ້ອງແນວໃດ?

ສິດທິບັດໄດ້ຮັບການປົກປ້ອງພາຍໃຕ້ກົດໝາຍວ່າດ້ວຍຊັບສິນທາງປັນຍາ ຂອງ ສປປ ລາວ. ກົດໝາຍດັ່ງກ່າວ ກຳນົດບັນດາເງື່ອນ ໄຂ, ໄລຍະເວລາ ແລະ ຂອບເຂດການປົກປ້ອງສິດທິບັດ. ກົດ ໝາຍດັ່ງກ່າວ ສາມາດຫາໄດ້ໃນເວັບໄຊ ຂອງສະພາແຫ່ງຊາດທີ່ www.na.gov.la ແລະ ສາມາດຕິດຕໍ່ສອບຖາມລາຍລະອຽດ ການຈັດຕັ້ງປະຕິບັດ ກົດໝາຍດັ່ງກ່າວໄດ້ທີ່ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

## IV. ມີຂໍ້ຍົກເວັ້ນການປົກປ້ອງບໍ່?

ຄຽງຄູ່ກັບການປົກປ້ອງ, ກົດໝາຍວ່າດ້ວຍຊັບສິນທາງປັນຍາ ກໍານົດຂໍ້ຍົກເວັ້ນ ການປົກປ້ອງສິດທິບັດການຢາຈຳນວນໜຶ່ງ ເຊິ່ງຂໍ້ຍົກເວັ້ນທີ່ສຳຄັນມີດັ່ງນີ້:

- **ການນຳໃຊ້ສິດລັດຖະບານເໜືອສິດທິບັດການ ຢາ:**

  ລັດຖະບານມີສິດນຳໃຊ້ ຫຼື ອະນຸຍາດໃຫ້ຜູ້ໃດໜຶ່ງນຳໃຊ້ ສິດທິບັດການຢາ ທີ່ໄດ້ຮັບການປົກປ້ອງຂອງຜູ້ອື່ນໂດຍ ບໍ່ຈຳເປັນຕ້ອງຂໍອະນຸຍາດຈາກຜູ້ເປັນເຈົ້າຂອງສິດທິບັດດັ່ງກ່າວຕາ ມເງື່ອນໄຂດັ່ງນີ້:

  1. ໃຊ້ສິດທິບັດ ເພື່ອຜະລິດຢາ ກໍລະນີມີຄວາມຈຳ ເປັນທາງດ້ານສາທາລະນະສຸກ ໂດຍບໍ່ມີຈຸດປະ ສົງທາງດ້ານການຄ້າ; ແລະ